# ບົດຄຳເຫັນ ສະແດງຄວາມເປັນຫ່ວງ ຕໍ່ ສປປ ລາວ ແລະ ACSC/APF 2016

Statement of Concern on Lao PDR and the ACSC/APF 2016

ເຖິງ ຄະນະກຳມະການຂັ້ນພາກພື້ນຂອງ
ACSC/APF 2015 ມາເລເຊຍ

Mr. Jerald Joseph, Malaysia, RSC Chair
Pengiran Datin Paduka Hajah Mariam Pg Hj Matarsat, Brunei Darussalam, RSC Member Mr. Pen Somony, Cambodia, RSC Member
Ms. Mida Saragih, Indonesia, RSC Member
Dr. Maydom Chanthanasinh, Lao PDR, RSC Member
Mr. Aung Myo Min, Myanmar, RSC Member
Mr. Eduardo C. Tadem, Philippines, RSC Member
Mr. Soe Min Than, Singapore, RSC Member
Ms. Wanun Permpibul, Thailand, RSC Member
Ms. Nguyen Thi Hoang Van, Vietnam, RSC Member
Ms. Reileen Dulay, Regional, RSC Member
Ms. Nalini Singh, Regional, RSC Member
Mr. Gus Miclat, Regional, RSC Member

ພວກຂ້າພະເຈົ້າ ທີ່ລົງລາຍເຊັນຂ້າງລຸ່ມນີ້ ແມ່ນອົງການຈັດຕັ້ງທາງສັງຄົມ, ເຄືອຂ່າຍ, ແລະ ພັນທະມິດ ລະດັບຊາດ, ພາກພື້ນ, ແລະສາກົນ ທີ່ເຮັດວຽກໃນບັນດາປະເທດເອເຊຍ ຕາເວັນອອກສຽງໃຕ້, ແລະທັງເປັນຜູ້ຊຸກຍູ້ຂະບວນການຈັດຕັ້ງກອງປະຊຸມອົງການຈັດຕັ້ງ ທາງສັງຄົມອາຊຽນ ແລະກອງປະ ຊຸມ ປະຊາຊົນອາຊຽນ (ACSC/APF) ຕະຫຼອດໄລຍະ 10 ຜ່ານມາ, ຈາກ 2005 ຫາ 2015. ພ້ອມ ກັນກັບທ່ານ, ພວກຂ້າພະເຈົ້າມຸ່ງໝັ້ນໃນການສົ່ງເສີມ ACSC/APF ໃຫ້ເປັນຂະບວນການທີ່ຂັບ ເຄື່ອນ ໂດຍອົງການຈັດຕັ້ງທາງສັງຄົມ, ມີອິສະຫຼະ, ແລະເປັນບ່ອນທີ່ເປີດຮັບເອົາການສ້າງຊຸມຊົນ ແລະຄວາມສາມັກຄີກັນລະຫວ່າງປະຊາຊົນ ເອເຊຍຕາເວັນອອກສຽງໃຕ້.

ເຖິງແມ່ນວ່າພວກຂ້າພະເຈົ້າໄດ້ສະແດງຄວາມມຸ່ງໝັ້ນຕໍ່ຂະບວນການ ACSC/APF ຜ່ານມາ ໂດຍຕະຫຼອດ, ພວກຂ້າພະເຈົ້າຍັງຢາກຂໍສະແດງຄວາມກັງວົນຕື່ມອີກ ຕໍ່ກັບສະພາບຄວາມເປັນ

ປະຊາທິປະໄຕ ແລະສິທິມະນຸດໃນ ສປປ ລາວ, ແລະຄວາມຫຍຸ້ງຍາກທີ່ພວກຂ້າພະເຈົ້າມອງ ເຫັນໃນການ ຈັດກອງປະຊຸມ ACSC/APF ໃນ ສປປ ລາວ ໃນປີ 2016 ນີ້.

ໃນລະຫວ່າງກອງປະຊຸມປຶກສາຫາລື ກ່ອນ ແລະລະຫວ່າງກອງປະຊຸມ APF 2015, ໂດຍ ສະເພາະ ໃນລະຫວ່າງກອງປະຊຸມຄະນະຈັດກອງປະຊຸມຂັ້ນພາກພື້ນຄັ້ງທີ 3 ໃນເດືອນມີນາ 2015, ກຸ່ມອົງ ການຈັດຕັ້ງທາງສັງຄົມລາວ ໄດ້ສະແດງຄວາມບໍ່ເຫັນດີຕໍ່ຈຸດຢືນຂອງ ACSC/APF ຕໍ່ບັນຫາ (1) ກຸ່ມຄົນທີ່ມີຄວາມຫຼາກຫຼາຍທາງເພດ/ຮັກຮ່ວມເພດ ຊາຍ/ຍິງ, ຮັກຫຼາຍເພດ, ແປງເພດ, ອະເພດ, (2) ຄົນພື້ນເມືອງ ແລະເຂື່ອນ, (3) ລະບົບການເມືອງ ຫຼາຍພັກ ແລະປະຊາທິປະໄຕ, ແລະ (4) ການ ຫາຍສາບສູນຂອງທ່ານ ສົມບັດ ສົມພອນ. ດຣ ໄມດົນ ຈັນທະນະສິນ, ຜູ້ຕາງໜ້າຝ່າຍລາວ ໃນຄະ ນະກຳມະການຂັ້ນພາກພື້ນ, ໄດ້ຢືນຢັນໃນ ກອງປະຊຸມປຶກສາຫາລືຂອງຄະນະຈັດກອງປະຊຸມຂັ້ນ ພາກພື້ນ ວ່າການສົນທະນາໃນຫົວຂໍ້ເຫຼົ່ານີ້ ຈະເກີດຂຶ້ນບໍ່ໄດ້ໃນລາວ.

ໂດຍອີງໃສ່ຈຸດນີ້, ພວກຂ້າພະເຈົ້າມອງເຫັນ ແລະມີເຫດຜົນພຽງພໍທີ່ຈະເຊື່ອວ່າ ການສົນທະນາຢ່າງ ອິສະຫຼະ ແລະການແລກປ່ຽນກ່ຽວກັບບັນຫາສຳຄັນໆ ຂອງພາກພື້ນ ເຊັ່ນ ຄວາມສະເໝີພາບ ແລະ ຄວາມຫຼາກຫຼາຍ, ໂຄງການພັດທະນາ ແລະຜົນກະທົບຕໍ່ປະຊາຊົນ ແລະສິ່ງແວດລ້ອມ, ອິສະລະ ພາບ ແລະສິທິມະນຸດ, ຈະບໍ່ສະມາດເກີດຂຶ້ນໄດ້ໃນລາວ.

ໂດຍອີງໃສ່ປະສົບການທີ່ຜ່ານມາໃນກອງປະຊຸມປະຊາຊົນເອເຊຍ-ຢູໂຣບ (AEPF9), ພວກຂ້າພະ ເຈົ້າ ບໍ່ເຫັນຄວາມໝັ້ນໃຈຈາກອົງການຈັດຕັ້ງທາງສັງຄົມທີ່ສັງກັດໃນລາວ ເລີຍວ່າການຈັດກອງປະ ຊຸມ ACSC/APF 2016 ໃນລາວ ຈະບໍ່ຖືກລົບກວນຈາກປັນຫາທີ່ຄ້າຍ ຄືກັບທີ່ໄດ້ປະເຊີນມາແລ້ວ ໃນກອງປະຊຸມ AEPF9.

ພວກຂ້າພະເຈົ້າໝັ້ນໃຈວ່າ ກອງປະຊຸມ ACSC/APF 2016 ຈະບໍ່ແມ່ນອົງການຈັດຕັ້ງທາງ ສັງຄົມ ລາວ ເປັນຜູ້ຈັດ. ແຕ່ລັດຖະບານລາວ ຈະຄວບຄຸມທຸກຢ່າງໃນກອງປະຊຸມ ACSC/APF 2016, ເຊິ່ງກົງກັນຂ້າມກັບຈິດໃຈຂອງງານທີ່ຄວນຈະເປັນອົງການຈັດຕັ້ງທາງສັງຄົມເປັນຜູ້ຈັດ. ເຖິງແມ່ນວ່າ ຜູ້ຕາງໜ້າອົງການຈັດຕັ້ງທາງສັງຄົມຈາກລາວ, ຫຼືລັດຖະບານລາວ ຈະຈິງໃຈ ໃຊ້ໂອກາດນີ້ເພື່ອດຶງ ເອົາຄວາມເຊື່ອຖືໃນການຈັດງານລັກສະນະ ACSC/APF ນີ້ຄືນມາ, ພວກເພິ່ນກໍ່ຍັງຕ້ອງໄດ້ແກ້ໄຂ ມາຕະການທີ່ຈະປ້ອງກັນການລ່ວງລະເມີດ ໂດຍທີ່ບໍ່ຕ້ອງໄດ້ຮັບ ໂທດ ຂອງພະນັກງານລັດໃນລະ ຫວ່າງ ແລະພາຍຫຼັງກອງປະຊຸມ AEPF9 ທີ່ຜ່ານມາ.

ບັນຫາການລັກພາຕົວທ່ານ ສົມບັດ ສົມພອນ, ແລະສິ່ງທີ່ເກີດຂຶ້ນອ້ອມແອ້ມກອງປະຊຸມ AEPF9, ໂດຍສະເພາະການທີ່ລັດຖະບານລາວ ບໍ່ປະຕິບັດຕາມຄຳສັນຍາທີ່ຈະອະນຸຍາດ ໃຫ້ງານນີ້ຈັດຂຶ້ນຢ່າງມີອິສະຫຼະ, ປາສະຈາກການແຊກແຊງ, ລ້ວນແຕ່ແມ່ນສັນຍານເຕືອນກ່ຽວ ກັບສະພາບຂອງອົງການຈັດຕັ້ງທາງສັງຄົມລາວໃນປະຈຸບັນ, ລວມທັງທັດສະນະຂອງ ລັດຖະບານລາວ ຕໍ່ກັບອົງການຈັດຕັ້ງທາງສັງຄົມ ແລະວຽກຖືກກົດໝາຍທີ່ເຂົາເຈົ້າເຮັດ. ການທີ່ອົງການຈັດຕັ້ງທາງສັງຄົມລາວ ບໍ່ເຕັມ ໃຈທີ່ຈະເຂົ້າຮ່ວມ, ລວມເຖິງຄວາມບໍ່ອາດສາມາດ ທີ່ຈະເຂົ້າຮ່ວມໄດ້ ໃນສະພາບພາຍຫຼັງກອງປະ ຊຸມ AEPF9 ນີ້, ເນັ້ນໜັກໃຫ້ເຫັນຢ່າງຈະແຈ້ງ ເຖິງຜົນສະທ້ອນຈາກເຫດການສະຫຼົດທີ່ເກີດຂຶ້ນຂອງກອງປະຊຸມ AEPF9. ພວກເຮົາບໍ່ຄວນຖື ເບົາຕໍ່ຄວາມເປັນຈິງກ່ຽວກັບຄວາມຢ້ານກົວທີ່ແຜ່ຫຼາຍໃນວົງການອົງການຈັດຕັ້ງທາງສັງຄົມ ລາວ ຕໍ່ການເວົ້າກ່ຽວກັບບັນຫາລະອຽດອ່ອນ ເຊັ່ນ ສົມບັດ ແລະການລັກພາຕົວ, ປະຊາຊົນ ພື້ນເມືອງ, ກຸ່ມຄົນທີ່ມີຄວາມຫຼາກຫຼາຍທາງເພດ, ລະບົບການເມືອງຫຼາຍ ພັກ ແລະປະຊາທິປະໄຕ.

ບົດຄຳເຫັນຈາກຄະນະກຳມະການຈັດຕັ້ງສາກົນຂອງ AEPF ແລະບົດຄຳເຫັນອື່ນໆ ຂອງອົງການຈັດຕັ້ງທາງສັງຄົມສາກົນ ທີ່ຖືກໄລ່ອອກຈາກປະເທດ ຄວນເປັນສິ່ງເຕືອນໃຈ ຕໍ່ການມີສ່ວນຮ່ວມຂອງ ລັດໃນສະຖານະການທີ່ໜ້າເປັນຫ່ວງໃນປະຈຸບັນ ກ່ຽວກັບການລະເມີດສິທິມະນຸດ ແລະອັນຕະ ລາຍທີ່ມີຕໍ່ອົງການຈັດຕັ້ງທາງສັງຄົມໃນລາວ.

ເມື່ອພິຈາລະນາເຖິງບັນຫາທີ່ກ່າວມາຂ້າງເທິງ, ພວກຂ້າພະເຈົ້າມອງບໍ່ເຫັນຄວາມເປັນໄປໄດ້ ທີ່ຈະຈັດກອງປະຊຸມ ACSC/APF ໄດ້ຢ່າງອິສະຫຼະໃນລາວ, ແລະຈະເປັນໄປບໍ່ໄດ້ເລີຍທີ່ ຈະປະຕິບັດຕາມຂໍ້ຕົກລົງກ່ຽວກັບຮູບແບບການມີສ່ວນຮ່ວມ ແລະແນວທາງຫຼັກການທີ່ໄດ້ລະບຸ ໄວ້ໃນກອງປະ ຊຸມ ACSC/APF 2015.

ພວກຂ້າພະເຈົ້າ, ອົງການຈັດຕັ້ງທາງສັງຄົມໃນເອເຊຍຕາເວັນອອກສຽງໃຕ້, ຫວັງວ່າ ທາງ ຄະນະກຳມະການຂັ້ນພາກພື້ນຂອງ ACSC/APF 2015 ຈະຊີ້ນຳ ແລະສະໜອງຄຳຕອບຕໍ່ ຄຳຖາມລຸ່ມນີ້ ໃຫ້ກັບຊຸມຊົນ ACSC/APF, ເຊິ່ງເປັນສິ່ງສຳຄັນຕໍ່ວິກິດໃນປະຈຸບັນໃນລາວ, ແລະເປັນສິ່ງສຳຄັນຕໍ່ກັບການກ້າວໄປຂ້າງໜ້າຂອງ ACSC/APF:

- ພວກເຮົາຈະຍອມຮັບກອງປະຊຸມ ACSC/APF ທີ່ບໍ່ໄດ້ຖືກຈັດຕັ້ງຢ່າງມີອິສະຫຼະ ໂດຍອົງການຈັດຕັ້ງທາງສັງຄົມໃນພາກພື້ນບໍ? ພວກເຮົາຈະຍອມຮັບການຄວບຄຸມ, ທັງທີ່ເຫັນໄດ້ ແລະທີ່ບໍ່ເຫັນໄດ້, ຈາກລັດຖະບານລາວ ໃນຂະບວນການນີ້ບໍ?

- ພວກເຮົາເຂົ້າໃຈເຖິງຄວາມສ່ຽງ ແລະອັນຕະລາຍຕໍ່ຜູ້ເຂົ້າຮ່ວມ ຢ່າງເລິກເຊິ່ງແລ້ວບໍ, ໂດຍສະເພາະຕໍ່ກັບຜູ້ເຂົ້າຮ່ວມຝ່າຍລາວ,ຈາກການຈັດກອງປະຊຸມ ACSC/APF ໃນລາວ?
- ພວກເຮົາຍິນດີທີ່ຈະດຶງສິດໃນການອອກສຽງຈາກຜູ້ເຂົ້າຮ່ວມ ແລະຊຸມຊົນຄົນທີ່ມີຄວາມຫຼາກຫຼາຍທາງເພດ, ຄົນພື້ນເມືອງ, ກຸ່ມສິ່ງແວດລ້ອມ, ນັກຕໍ່ຕ້ານເຂື່ອນ, ນັກສົ່ງເສີມ ປະຊາທິປະໄຕ, ແລະນັກປົກປ້ອງສິທິມະນຸດ, ຄອບຄົວຂອງນັກໂທດ ແລະຜູ້ທີ່ຫາຍ ສາບສູນ, ໂດຍການຈັດກອງປະຊຸມ ACSC/APF ໃນລາວບໍ?
- ເຖິງແມ່ນວ່າພວກເຮົາຈະຢາກປະຕິບັດຕາມແນວຄວາມຄິດດ້ານການສ້າງຜົນປະໂຫຍດໃຫ້ປະຊາຊົນລາວ ໃນປະເທດລາວ, ແລະສະໜັບສະໜູນອົງການຈັດຕັ້ງທາງສັງຄົມ ລາວ, ພວກເຮົາພ້ອມທີ່ຈະເສຍສະຫຼະຄວາມຖືກຕ້ອງຂອງຂະບວນການຂອງ ACSC/APF ໃນລາວ ແລະເສຍສະຫຼະການປະຕິບັດຕາມແນວທາງຫຼັກການ ແລະຮູບແບບການຮ່ວມມືຂອງ ACSC/APF ບໍ?

ພວກຂ້າພະເຈົ້າຄາດວ່າ ຄຳຕອບຕໍ່ກັບຄຳຖາມຂ້າງເທິງນັ້ນ ຈະອອກມາໃນແງ່ລົບ, ສະນັ້ນ,

ພວກຂ້າພະເຈົ້າຂໍວິງວອນຕໍ່ຄະນະກຳມະການ ACSC/APF 2015 ພິຈາລະນາຢ່າງຈິງຈັງທີ່ຈະບໍ່ຮັບຮອງເອົາການຈັດກອງປະຊຸມ ACSC/APF 2016 ໃນລາວ.

ພວກຂ້າພະເຈົ້າວິງວອນຕໍ່ຄະນະກຳມະການ ACSC/APF 2015 ໃຫ້ນຳເອົາການສົນທະນາບັນຫາ ນີ້ກັບຄືນສູ່ກອງປະຊຸມຜູ້ນຳການເມືອງ ທັງໃນລາວ ແລະໃນພາກພື້ນ, ເພື່ອຊອກຫາທາງເລືອກອື່ນສຳລັບກອງປະຊຸມ ACSC/APF 2016 ນອກເໜືອຈາກປະເທດລາວ, ເພື່ອຮັບປະກັນວ່າປະຊາຊົນລາວ ແລະອົງການຈັດຕັ້ງທາງສັງຄົມລາວ ຈະສາມາດເຂົ້າຮ່ວມໄດ້ຢ່າງມີອິສະຫຼະ ໃນຂະບວນການ ນີ້.

10 ກັນຍາ 2015.

ອົງການຈັດຕັ້ງທີ່ລົງລາຍເຊັນ

Aliansi Masyarakat Adat Nusantara (AMAN) Aravati, Myanmar
ASEAN Parliamentarians for Human Rights (APHR) ASEAN SOGIE Caucus
Asia Democracy Network (ADN)
Asia Indigenous Peoples Network on Extractive Industries and Energy (AIPNEE) Asia Indigenous Peoples Pact (AIPP)
Asia Pacific Indigenous Youth Network (APIYN)

Asian Federation Against Involuntary Disappearances (AFAD)
Asian Forum for Human Rights and Development (FORUM-ASIA) Asian Network for Free Elections (ANFREL)
Association to Protect Religious Freedom, Vietnam
Ayar West Development Organization, Minbu, Myanmar Ayeyarwady MATA, Myanmar
BAI National Alliance of Indigenous Women, Philippines Boat People SOS (BPSOS)
Burma Partnership (BP)
Cambodia Indigenous Peoples Organization (CIPO) Cambodia Indigenous Youth Association (CIYA)
Cambodian Civil Society Working Group on ASEAN (CCWA) Cambodian Food and Service Workers' Federation (CFSWF) Cambodian Volunteers for Society (CVS)
Cambodian Youth Network (CYN)
Capacity Building Initiative, Myanmar
Center for Sustainable Development in Mountainous Areas (CSDM), Vietnam
Civil Society Forum, Vietnam
Coalition of Cambodian Farmers Community (CCFC)
Coalition to Abolish Modern-day Slavery in Asia (CAMSA)
Colors Rainbow, Myanmar
Community Response Group (COMREG), Myanmar
Cooperation Committee for Cambodia (CCC)
Cordillera Women's Education Action Research Center (CWEARC), Cordillera Region, Philippines
Defend the Defenders, Vietnam
ECCD Network, Pwint Phyu, Myanmar
Education Garden, Magway, Myanmar
Equality Myanmar
Farmer Rights and Development Organization, Magway, Myanmar
Focus on the Global South
Free Jonas Burgos Movement, AFAD, Philippines
Fundação Feto iha Kbiit Servisu Hamutuk (FFKSH), Timor Leste
Genuine People's Servants (GPS), Myanmar
Green Future Environmental Activities Group, Yenangyaung, Myanmar
Green Network Sustainable Environment Group, Magway, Myanmar
Green Peasant Institute (GPI), Myanmar
Guardian Network, Pakokku, Myanmar
Hands of Unity Group, Magway, Myanmar
Harmony Volunteer Group, Magway, Myanmar
Highlander Associations (HA), Cambodia
HuMa, Indonesia
IFI Watch, Magway, Myanmar

Ikohi, AFAD, Indonesia
Imparsial, Indonesia
Indigenous Peoples Human Rights Defenders (IPHRD)
Indigenous Peoples Task Force on ASEAN
Ingyin Thar Social Service, Myo Thit, Myanmar
Innabuyog Federation of Indigenous Women in Cordillera, Philippines Institut Titian Perdamaian (ITP / Peacebuilding Institute), Indonesia International NGO Forum on Indonesian Development (INFID)
International Gay and Lesbian Human Rights Commission (IGLHRC) International Network of Engaged Buddhists (INEB)
International Rivers (IR)
Internet Law Reform Dialogue (iLaw), Thailand
Jaringan Orang Asal SeMalaysia (JOAS)
Justice for Peace Foundation, AFAD, Thailand
Kachin Peace Network, Myanmar
Kachin Women Peace Network, Myanmar
Karen Environment and Social Action Network, Myanmar
Khô´i Nhon Sanh (KNS) CAODAISM, Vietnam
Koalisyon ng mga Katutubo at Samahan ng Pilipinas/National Coaltion of Indigenous Peoples in the Philippines (KASAPI, Inc.)
Kontras, Indonesia
Kusog sa Katawhang Lumad sa Mindanao (KALUMARAN), Philippines
Land Core Group, Myanmar
Lands In Our Hand, Myanmar
Lighthouse, Myanmar
Local Resource Center, Myanmar
Magway EITI Watch Group, Magway, Myanmar
Magway Farmer Union, Myanmar
Magway Youth Network, Myanmar
Manaw Thukha Social Service, Yesagyo, Myanmar
MATA (Mdy working group), Myanmar
ME, Community Development Center, Magway, Myanmar
Metta Development Foundation, Myanmar
Migrant Forum in Asia (MFA)
Mintae Development Group, Mintae , Pwint Phyu, Myanmar
Myaing Youth Development Organization, Myaing, Myanmar
Myanmar China Pipeline Watch Committee
Myanmar Civil Society Coordinating Group on ASEAN
Myanmar Social Initiative Group, Magway, Myanmar

Nationalities Youth Forum, Myanmar
Organic Agro and Farmer Affair Development Group, Pwint Phyu, Myanmar Organisation for the Promotion of Kui Culture (OKC), Cambodia
Pan Pyoe Lat Social Organization, Pwint Phyu, Myanmar
Paung Ku, Myanmar
Peace and Justice, Myanmar
Peace & Open Society, Kyaukse Township, Myanmar
People’s Empowerment Foundation (PEF), Thailand Pikhumpongan Dlibon Subanen, Inc. (PDSI), Philippines Pioneer Star, Seik Phyu, Myanmar
Pyo Khinn Thit , Myanmar
Relatives Committee of the May 1992 Heroes, AFAD
Religion and Ethnic Minorities Defenders, Vietnam
SAVE Rivers, Sarawak
School for Wellbeing Studies and Research, Thailand
Shwe Ye’ Na Thar Labour Group, Yenangyaung, Myanmar
Social Care Volunteer Group, Magway, Myanmar
Solidarity for Asian Peoples’ Advocacies (SAPA) Working Group on ASEAN South East Asian Committee for Advocacy (SEACA)
Task Force Detainees of the Philippines (TFDP) The Sombath Initiative
Thirst Aid, Myanmar
Triangle Women Group, Myanmar
U Chit Maung Library and Community Forestry Group, Minhla, Myanmar United ACT, Myanmar
Vietnamese League for Human Rights in Switzerland
Vietnamese Prisoners of Conscience (FVPoC)
Vietnamese Women for Human Rights (VNWHR) VOICE Vietnam
Women for Human Rights in Vietnam (WFHR) Yayasan Lintas Nusa Batam, Indonesia
Yoema Yape, Ngaphe’, Myanmar
Youth Current Group, Taung Dwin Gyi, Myanmar

## ໂດຍໄດ້ຮັບຄວາມສາມັກຄີຊ່ວຍເຫຼືອຈາກອົງການຈັດຕັ້ງໃນເອເຊຍ ແລະສາກົນ, ແລະຝ່າຍບຸກຄົນ:

Active Society Nepal (ASN), Nepal
Adivasi Women’s Network
Advocacy Forum, AFAD, Nepal
Association of Parents of Disappeared Persons, AFAD, Kashmir, India
Borok Peoples Human Rights Organisation/Borok Indigenous /Tribal Peoples Development Center (BPHRO/BITPDC), India

Chittagong Hill Tracts Citizens' Committee (CHTCC), Bangladesh
CHT Indigenous Jumma Association Australia (CHTIJAA)
Civil Society Women Organization (CSWO), Meghalaya, North East India Conflict Victims Society for Justice, AFAD, Nepal
Defence for Human Rights, AFAD, Pakistan
Families of the Disappeared, AFAD, Sri Lanka
Finnish Asiatic Society
Indigenous Peoples Movement for Self Determination and Liberation (IPMSDL) Indigenous Women's Forum Northeast India (IWFNEI)
International Coalition Against Enforced Disappearances (ICAED)
International Council for the Indigenous Peoples of CHT (ICIP-CHT), France Kapaeeng Foundation, Bangladesh
Karbi Human Rights Watch, NE India
Kirat Chamling Language Culture Development Association (KCLCDA), Nepal
Kirat Welfare Society (KWS), Nepal
Kirat Youth Society (KYS), Nepal
Knights for Peace, International
Kulung Mimchha Guskham (KMG), Nepal
La Voix des Jummas, France
Lawyers for the Human Rights of Nepalese Indigenous Peoples (LAHURNIP), Nepal Naga Peoples Movement for Human Rights (NPMHR), North East India
Naga Women's Union, Manipur, India
National Indigenous Woman's Federation (NIWF), Nepal
Nepal Federation of Indigenous Nationalities (NEFIN)
Nepal Kirat Kulung Bhasa Sanskriti Utthan Sangh (NKKBSUS)
NGO-Federation of Nepalese Indigenous Nationalities (NGO-FONIN)
North South Initiative
Odhikar, AFAD, Bangladesh
Papora Indigenous Development Association (PIDA), Taiwan/China
People Unity Youth Society (PUYS), Nepal
Youth Awareness Society Nepal (YASN)
Youth Federation of Indigenous Nationalities (YFIN), Nepal